**ຂອບເຂດວຽກ (TOR)**

**ການປະມູນຈຳໜ່າຍ ຍານພາຫະນະ (ລົດກະບະ) ທີ່ບໍ່ໄດ້ນຳໃຊ້ ຈຳນວນ 7 ຄັນ ແບບເໝົາລວມ**




ບໍລິສັດ ໄຟຟ້າຫົງສາ ຈຳກັດ ຈັດຕັ້ງໃນປີ 2009 ໂດຍບ້ານປູ ເພາເວີ ຈຳກັດ (ມະຫາຊົນ) (BPP), RH International (Singapore) Corporation Pte. Ltd. ເປັນບໍລິສັດຍ່ອຍຂອງ RATCH Group Public Company Limited ແລະ Lao Holding State Enterprise (LHSE) ເພື່ອພັດທະນາແລະດຳເນີນງານໂຮງໄຟຟ້າຖ່ານຫີນລິກໄນ ກຳລັງຜະລິດ 1,878 MW ຫຼືທີ່ຮູ້ຈັກກັນໃນນາມ “ໂຮງໄຟຟ້າຫົງສາ”. ເມື່ອການກໍ່ສ້າງສຳເລັດຕາມກຳນົດໃນປີ 2016 ໂຮງໄຟຟ້າຫົງສາ ຈຳກັດ ກາຍເປັນໂຮງໄຟຟ້າທີ່ມີກຳລັງການຜະລິດສູງທີ່ສຸດໃນ ສປປ ລາວ ປະຈຳຢູ່ເມືອງຫົງສາ ຫົງສາ ແຂວງໄຊຍະບູລີ ສປປ ລາວ.

## 1. ຈຸດປະສົງ

ເພື່ອຈຳໜ່າຍຍານພາຫະນະ (ລົດກະບະ) ທີ່ບໍ່ໄດ້ນຳໃຊ້ ຈຳນວນ 7 ຄັນ ຍີ່ຫໍ້ CHEVROLET COLORADO 4WD ໂດຍໃຊ້ວິທີການປະມູນ ໃຫ້ເກີດຄວາມໂປ່ງໃສ, ກວດກາໄດ້ ແລະ ເໝາະສົມທາງເສດຖະກິດແກ່ໜ່ວຍງານ.

## 2. ຂອບເຂດວຽກ (Scope)

ຂາຍສັບສິນຕາມສະພາບ (As-Is, Where-Is) ໂດຍບໍ່ມີການຮັບປະກັນຫຼັງການຂາຍ (No Warranty).

ຜູ້ຂາຍບໍ່ຮັບປະກັນຄຸນນະພາບ ຫຼື ສະພາບການໃຊ້ງານ;
ຜູ້ຊື້ຕ້ອງຍອມຮັບຕາມສະພາບທີ່ກວດພົບ.

ຜູ້ຊື້ເປັນຜູ້ຮັບຜິດຊອບການຂົນຍ້າຍ, ອຸປະກອນ, ພາຫະນະ ແລະ ຄ່າໃຊ້ຈ່າຍທັງໝົດໃນການນຳລົດອອກຈາກພື້ນທີ່.

ເງື່ອນໄຂ Incoterms: Ex-Works (EXW) ທີ່.Hongsa Power Office – Phonchan, Hongsa District, Xayaboury Province

ພາຍໃຕ້ເງື່ອນໄຂ EXW:

1. ຜູ້ຂາຍ (Seller) ເຮັດໜ້າທີ່:

   a) ຈັດເຕັມລົດໃຫ້ພ້ອມຢູ່ໃນສະຖານທີ່ສົ່ງມອບ
   b) ເປີດເປັນພື້ນທີ່ໃຫ້ຜູ້ຊື້ເຂົ້າດຳເນີນການຂົນຍ້າຍ
   c) ສົ່ງມອບເອກະສານການຖືກຕ້ອງຂອງລົດຫຼັງຈາກຜູ້ຊື້ຊຳລະເງິນຄົບຖ້ວນຕາມ TOR

2. ຜູ້ຊື້ (Buyer) ເຮັດໜ້າທີ່:

   a) ຮັບຜິດຊອບຄວາມສ່ຽງທັງໝົດຂອງລົດ ຕັ້ງແຕ່ເລີ່ມການຂົນຍ້າຍ
   b) ຈັດຫາລົດຍົກ, ອຸປະກອນ, ແລະ ແຮງງານສຳລັບການຂົນຍ້າຍດ້ວຍຕົນເອງ
   c) ຮັບຜິດຊອບຄວາມເສຍຫາຍທີ່ເກີດຂຶ້ນໃນລະຫວ່າງການຂົນສົ່ງ
   d) ຕ້ອງຂົນຍ້າຍລົດອອກຈາກພື້ນທີ່ ພາຍໃນເວລາທີ່ກຳນົດ

**3. ລາຍລະອຽດສັບສິນ (ພາບລວມ)**

ປະເພດ: ລົດກະບະຂັບ 4 ລໍ້ (4WD) ຮຸ່ນ CHEVROLET COLORADO ເຄື່ອງ 2,800 CC ປີຜະລິດ 2016

| ລຳດັບ | Plate | ລຸ້ນ | ເຄື່ອງຈັກ | ເລກໄມ (ກິໂລແມັດ) | ລາຍການສ້ອມແປງໂດຍປະມານ | ໝາຍເຫດ |
|---|---|---|---|---|---|---|
| 1 | 9298 | CHEVROLET COLORADO 4WD | 2800 CC | 362,308 | ລະບົບເຄື່ອງຈັກ; ແລັກພວງມາໄລ | ຂາຍຕາມສະພາບ |
| 2 | 9301 | CHEVROLET COLORADO 4WD | 2800 CC | 344,645 | ລະບົບເຄື່ອງຈັກ; ແລັກພວງມາໄລ; ເກຍ 4WD | ຂາຍຕາມສະພາບ |
| 3 | 9270 | CHEVROLET COLORADO 4WD | 2800 CC | 170,275 | ລະບົບເຄື່ອງຈັກ; ແລັກພວງມາໄລ; ເກຍ 4WD | ຂາຍຕາມສະພາບ |

| | | | | | | |
|---|---|---|---|---|---|---|
| 4 | 9491 | CHEVROLET COLORADO 4WD | 2800 CC | 299,061 | ລະບົບເຄື່ອງຈັກ; ເທີໂບ; ເພືອງທ້າຍ; ແລັກພວງມາໄລ; | ຂາຍຕາມສະພາບ |
| 5 | 9363 | CHEVROLET COLORADO 4WD | 2800 CC | 249,884 | ແລັກພວງມາໄລ; ເກຍ 4WD; ລະບົບເຄື່ອງຈັກ | ຂາຍຕາມສະພາບ |
| 6 | 9263 | CHEVROLET COLORADO 4WD | 2800 CC | 175,975 | ລະບົບເຄື່ອງຈັກ; ແລັກພວງມາໄລ; ເກຍ 4WD | ຂາຍຕາມສະພາບ |
| 7 | 7025 | CHEVROLET COLORADO 4WD | 2800 CC | 346,170 | ລະບົບເຄື່ອງຈັກ; ແລັກພວງມາໄລ; ເກຍ 4WD | ຂາຍຕາມສະພາບ |

## 4. ຄຸນສົມບັດຂອງຜູ້ເຂົ້າປະມູນ

a) ເປັນບຸກຄົນ ສັນຊາດລາວ ຫຼື ນິຕິບຸກຄົນຕາມກົດໝາຍຂອງ ສປປ ລາວ.
b) ບໍ່ເຄີຍຜິດນັດຊໍາລະ/ຖືກຍຶດຫຼັກປະກັນ/ຖືກຕັດສິດໃນໂຄງການກ່ອນໜ້າ.
c) ບໍ່ເປັນບຸກຄົນລົ້ມລະລາຍ/ບໍ່ມີຄະດີທຸຈະລິດ/ບໍ່ຢູ່ໃນຂະບວນການຟ້ອງລົ້ມລະລາຍ.
d) ມີສະພາບການເງິນທີ່ພ້ອມ ສາມາດຊໍາລະເງິນໄດ້ຕາມກໍານົດ.
e) ມີແຜນການຂົນຍ້າຍທີ່ຊັດເຈນ ປອດໄພ ແລະ ເຮັດໄດ້ຈິງ.
f) ຜູ້ມີອໍານາດເຊັນລົງນາມຊັດເຈນ (ສໍາລັບນິຕິບຸກຄົນ).

## 5. ວິທີການປະມູນ

a) ຮູບແບບ: ປະມູນແບບຍື່ນຊອງ (Sealed Bid) ຕາມແບບຟອມທີ່ກໍານົດ.
b) ເອກະສານປະກອບ: ແບບຟອມສະເໜີລາຄາ, ສໍາເນົາໃບຮັບຮອງ/ບັດປະຈໍາຕົວ, ໃບມອບອໍານາດ (ຖ້າມີ) ແລະ ຢືນລາຄາຜູກມັດ 90 ວັນ.
c) ຫຼັກປະກັນເຂົ້າປະມູນ (Bid Security): ຕາມການກໍານົດຂອງບໍລິສັດ ແລະ ຕ້ອງຊໍາລະໃຫ້ຄົບຖ້ວນໃນວັນຍື່ນຊອງ.
d) ວິທີຍື່ນຊອງ: ຍື່ນດ້ວຍຕົນເອງພາຍໃນກໍານົດເວລາ.
e) ການເປີດຊອງ/ພິຈາລະນາ: ຄະນະກໍາມະການຈະເປີດຊອງ ທີ່ບໍລິສັດໄຟຟ້າຫົງສາ ສໍານັກງານໂພນຈັນ ຕາມວັນເວລາທີ່ແຈ້ງ.
f) ຜູ້ສະເໜີລາຄາຕ້ອງເຂົ້າກວດສະພາບລົດໃນວັນທີກໍານົດ; ຖ້າບໍ່ເຂົ້າ ຖືວ່າຍອມຮັບສະພາບຈິງໂດຍບໍ່ມີຂໍ້ໂຕ້ຖຽງ.
g) ຕ້ອງນໍາສະເຫນີແຜນການຂົນຍ້າຍ ແລະ ການໂອນກໍາມະສິດໃຫ້ຄະນະກໍາມະການພິຈາລະນາ.

## 6. ເກນການຄັດເລືອກຜູ້ຊະນະ

a) ໃຫ້ສິດກັບຜູ້ສະເໜີຊື້ແບບເໝົາລວມທັງ 7 ຄັນ ກ່ອນ; ຖ້າບໍ່ມີ ຈຶ່ງພິຈາລະນາຜູ້ສະເໜີຊື້ແບບລາຍຄັນໃນລຳດັບຖັດໄປ.
b) ພິຈາລະນາຈາກລາຄາສູງສຸດ, ຄວາມຄົບຖ້ວນຂອງເອກະສານ/ຫຼັກປະກັນ ແລະ ຄວາມພ້ອມໃນການຊຳລະແລະຂົນຍ້າຍ.

## 7. ເງື່ອນໄຂການສະເໜີລາຄາ, ການຊຳລະເງິນ ແລະ ການສົ່ງມອບ

a) ການສະເໜີລາຄາ: ຕ້ອງສະເໜີເປັນສະກຸນເງິນ ບາດ (THB).
b) ການຊຳລະເງິນ: ຊຳລະເປັນສະກຸນ ກີບ (LAK) ໂດຍໃຊ້ອັດຕາແລກປ່ຽນ BCEL ປະເພດ Selling Rate ວັນທີ 20 ເມສາ 2026.
c) ຜູ້ຊະນະປະມູນຕ້ອງຊຳລະເງິນເຕັມຈຳນວນພາຍໃນ 30 ວັນ ນັບແຕ່ວັນເຊັນສັນຍາຊື້-ຂາຍ.
d) ຕ້ອງດຳເນີນການໂອນກຳມະສິດໃຫ້ແລ້ວສຳເລັດພາຍໃນ 60 ວັນ ນັບແຕ່ວັນເຊັນສັນຍາ.
e) ຕ້ອງຂົນຍ້າຍລົດອອກຈາກພື້ນທີ່ໃຫ້ແລ້ວສຳເລັດພາຍໃນ 30 ວັນ ຫຼັງຈາກໂອນກຳມະສິດ.
f) ຖ້າຜູ້ຊື້ບໍ່ປະຕິບັດຕາມກຳນົດເວລາຂ້າງເທິງ ບໍລິສັດໄຟຟ້າຫົງສາ ຈຳກັດ ຈະບໍ່ຮັບຜິດຊອບຕໍ່ຄວາມເສຍຫາຍໃດໆ.

## 8. ຫຼັກປະກັນສັນຍາ (Performance Security)

a) ຜູ້ຊະນະປະມູນຕ້ອງວາງຫຼັກປະກັນສັນຍາເປັນ ໃບຄໍ້າຮັບຮອງຫຼືຈົດໝາຍຮັບປະກັນ (Letter of Guarantee) ຫຼື ເງິນສົດຄໍ້າປະກັນ.
b) ວົງເງິນຫຼັກປະກັນ: 70,000,000 ກີບ (ປະມານ 100,000 ບາດ).
c) ກໍລະນີຜູ້ຊະນະປະມູນຍົກເລີກສັນຍາ: ບໍລິສັດມີສິດຍຶດເງິນຄໍ້າປະກັນ 100%.
d) ກໍລະນີໄດ້ຮັບສັນຍາຊື້-ຂາຍແລ້ວ ແຕ່ບໍ່ໂອນກຳມະສິດໃຫ້ສຳເລັດໃນ 60 ວັນ: ບໍລິສັດມີສິດຍຶດ 100%.
e) ຖ້າບໍ່ປະຕິບັດຕາມເງື່ອນໄຂທີ່ກຳນົດ ບໍລິສັດມີສິດຍຶດເງິນຄໍ້າປະກັນໄດ້.

## 9. ກຳນົດການ (ເບື້ອງຕົ້ນ)

- ປະກາດ TOR/ເຊີນຊວນ: ວັນທີ 16 ກຸມພາ 2026.
- ເປີດໃຫ້ກວດສະພາບລົດ: ວັນທີ 17 ມີນາ 2026 ທີ່ສຳນັກງານໂພນຈັນ ເມືອງຫົງສາ.
- ປິດຮັບຊອງສະເໜີລາຄາ: ວັນທີ 20 ເມສາ 2026.
- ເປີດຊອງ/ປະກາດຜົນ: ວັນທີ 20 ພຶດສະພາ 2026.

## 10. ຊ່ອງທາງຕິດຕໍ່

ຜູ້ປະສານງານ: ນາງ Phannipa Kiatbumrung (ຜູ້ຈັດການຝ່າຍຈັດຊື້)

ໂທ: +856-20-52441802 | +856(0)74266121-4 ຕໍ່ 1117

ອີເມວ: phannipa_k@hongsapower.com

ສະຖານທີ່ຍື່ນຊອງ/ກວດລົດ: ບໍລິສັດໄຟຟ້າຫົງສາ ຈຳກັດ ສຳນັກງານໂພນຈັນ ເມືອງຫົງສາ ແຂວງໄຊຍະບູລີ ສປປ ລາວ

ລາຍລະອຽດສັບສິນ





















## ແບບພອມສະເໜີລາຄາ (Price Proposal Form)

| | |
|---|---|
| ຊື່ຜູ້ສະເໜີ/ນິຕິບຸກຄົນ | [ກະລຸນາລະບຸ] |
| ທີ່ຢູ່ / ເລກປະຈຳຕົວຜູ້ເສຍພາສີ | [ກະລຸນາລະບຸ] |
| ຜູ້ຕິດຕໍ່ / ໂທລະສັບ / ອີເມລ | [ກະລຸນາລະບຸ] |

| ຫຼັກປະກັນເຂົ້າປະມູນ<br>(Bid Security) | | [ແບບຫຼັກຖານການຊຳລະ / ຈຳນວນ] | | |
|---|---|---|---|---|
| | | | | |
| **Plate** | ລາຄາສະເໜີ<br>**(THB)** | **VAT 10 %** | ລາຄາລວມ<br>**(THB)** | ໝາຍເຫດ |
| 9298 | | | | |
| 9301 | | | | |
| 9270 | | | | |
| 9491 | | | | |
| 9363 | | | | |
| 9263 | | | | |
| 7025 | | | | |
| ລາຄາເຫມາລວມທັງສິນ<br>(THB)......................... | | [.......................................................]<br>THB | | |

ຂ້າພະເຈົ້າຮັບຮອງວ່າຂໍ້ມູນທີ່ໃຫ້ໄວ້ແມ່ນຖືກຕ້ອງ ແລະ ຍອມຮັບເງື່ອນໄຂທັງໝົດຕາມ TOR ທີ່ກຳນົດ.

ລາຍເຊັນຜູ້ສະເໜີ ວັນທີ

(.......................................) [........../........../..........]

ຕຳແໜ່ງ / ຕຣາບໍລິສັດ

NNN Building 4th Floor/Room No. D5, Boulichan Road, Phonsinouan Village,
Sisattanark District, Vientiane Capital, Lao PDR.
Tel: + 856 21 223911, 222315, 222482, 219381
Fax: + 856 21 222089

Phonchanh Office, Hongsa District, Xayaboury Province, Lao PDR.

Tel: + 856 74 266121 - 29
Fax: + 856 74 266120